**ມິຊຊາອາທິດທີ 7 ກຳມົດທຳມະດາ**

**ວັນທີ 20 ກຸມພາ 2022**



**ພຣະວໍລະສານໂດຍນັກບຸນລູກາ 6, 27-38**

ໃນເວລານັ້ນ, ພຣະເຢຊູເຈົ້າກ່າວວ່າ: ເຮົາບອກພວກເຈົ້າທີ່ກຳລັງຟັງເຮົາຢູ່ດຽວນີ້ວ່າ: ຈົ່ງຮັກສັດຕູ, ຈົ່ງທຳດີຕໍ່ຜູ້ຄຽດຊັງພວກເຈົ້າ. ຈົ່ງອວຍພອນໃຫ້ຜູ້ທີ່ດ່າວ່າພວກເຈົ້າ. ຈົ່ງພາວະນາອຸທິດໃຫ້ຜູ້ທີ່ບັງບຽດພວກເຈົ້າ. ຜູ້ໃດຕົບແກ້ມເຈົ້າເບື້ອງໜຶ່ງ ກໍຈົ່ງປິ່ນອີກເບື້ອງໜຶ່ງໃຫ້ເຂົາຕົບ. ຜູ້ໃດເອົາເສື້ອຕຸ້ມຂອງເຈົ້າໄປ ກໍຢ່າຫວງໃຫ້ເຂົາເອົາເສື້ອໃນໄປດ້ວຍ. ໃຜຂໍຫຍັງກໍຈົ່ງເອົາໃຫ້. ໃຜເອົາຂອງເຈົ້າໄປກໍຢ່າຫວງຄືນ. ພວກເຈົ້າຢາກໃຫ້ຄົນທັງຫລາຍທຳຕໍ່ພວກເຈົ້າແນວໃດ ກໍຈົ່ງທຳຕໍ່ພວກເຂົາແນວນັ້ນ. ຖ້າພວກເຈົ້າຮັກຄົນທີ່ຮັກພວກເຈົ້າແລ້ວ ພວກເຈົ້າຈະໄດ້ຮັບຄຸນປະໂຫຍດຫຍັງ? ຍ້ອນວ່າຄົນບາບກໍຮັກຜູ້ທີ່ຮັກເຂົາດັ່ງດຽວກັນ. ຖ້າພວກເຈົ້າທຳດີຕໍ່ຜູ້ທີ່ທຳດີຕໍ່ພວກເຈົ້າແລ້ວ ພວກເຈົ້າຈະໄດ້ຮັບຄຸນປະໂຫຍດຫຍັງ? ພວກຄົນບາບກໍທຳດັ່ງດຽວກັນ. ຖ້າພວກທ່ານໃຫ້ຢືມແກ່ຜູ້ທີ່ພວກທ່ານຫວັງວ່າຈະໄດ້ຄືນແລ້ວ ພວກທ່ານຈະໄດ້ຄຸນປະໂຫຍດຫຍັງ? ພວກຄົນບາບກໍໃຫ້ໝູ່ພວກຄົນບາບຢືມ ເພື່ອຫວັງຈະໄດ້ຮັບຕອບແທນເໝືອນກັນ. ສ່ວນພວກເຈົ້າ ຈົ່ງຮັກສັດຕູ. ຈົ່ງທຳດີແລະໃຫ້ຢືມໂດຍບໍ່ຫວັງຈະໄດ້ຫຍັງຕອບແທນ. ພວກເຈົ້າຈະໄດ້ຮັບລາງວັນອັນຍິ່ງໃຫຍ່ແລະຈະເປັນບຸດຂອງພຣະເຈົ້າຜູ້ສູງສຸດ. ຍ້ອນວ່າພຣະອົງຊົງພໍພຣະໄທດີຕໍ່ຄົນອະກະຕັນຍູແລະຄົນບໍ່ດີດ້ວຍ.

ຈົ່ງເມດຕາກາລຸນາຄືພຣະບິດາຂອງພວກເຈົ້າຊົງເມດຕາກາລຸນາເຖີດ. ຢ່າພິພາກສາແລ້ວພວກເຈົ້າຈະບໍ່ຖືກພິພາກສາ. ຢ່າຕັດສິນແລ້ວພວກເຈົ້າຈະບໍ່ຖືກຕັດສິນ. ຈົ່ງໃຫ້ອະໄພແລະເຂົາກໍຈະໃຫ້ອະໄພແກ່ພວກເຈົ້າ. ຈົ່ງໃຫ້ເຂົາ ແລະເຂົາຈະໃຫ້ພວກເຈົ້າ. ເຂົາຈະຕິດຕວງໃສ່ໄຖ່ໃຫ້ພວກເຈົ້າເຕັມຂະໜາດ ທັງແໜ້ນຈົນເຕັມລົ້ນອອກມາ. ຍ້ອນວ່າພວກເຈົ້າຕິດຕວງໃຫ້ເຂົາແນວໃດ ເຂົາກໍຈະຕິດຕວງໃຫ້ພວກເຈົ້າແນວນັ້ນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ບົດອ່ານທັງສາມບົດແລະບົດເພງສັກສິດຂອງວັນອາທິດນີ້ລ້ວນແຕ່ເຊື້ອເຊີນພວກເຮົາໃຫ້ມີຄວາມເມດຕາກະລຸນາເໝືອນກັບພຣະບິດາເຈົ້າສະຫວັນເປັນຜູ້ເມດຕາກະລຸນານັ້ນແລ.

ໃນບົດອ່ານທີໜຶ່ງ, ເຖິງວ່າກະສັດຊາອຸນຈະຊອກຫາທຸກວິທີທາງເພື່ອທຳຮ້າຍດາວິດ. ແລະວັນນີ້, ດາວິດກໍມີໂອກາດທີ່ຈະຂ້າຊາອຸນຜູ້ເປັນກະສັດ, ແຕ່ດາວິດກໍບໍ່ທຳຮ້າຍຊາອຸນ. ຍ້ອນວ່າເຂົາເປັນຜູ້ໄດ້ຖືກເສກສະເຫລີມຈາກພຣະເຈົ້າ. ດັ່ງນັ້ນ, ດາວິດຈຶ່ງບໍ່ທຳຮ້າຍຄົນຂອງພຣະເຈົ້າ. ສິ່ງນີ້ສະແດງອອກເຖິງຄວາມເມດຕາກະລຸນາຂອງດາວິດທີ່ມີຕໍ່ກະສັດຊາອຸນ.ແລະຄວາມເມດຕາກະລຸນານີ້ສະທ້ອນໃຫ້ເຫັນເຖິງຜູ້ເປັນບໍ່ເກີດແຫ່ງຄວາມຮັກເມດຕາອັນແມ່ນພຣະເຈົ້ານັ້ນເອງ. ດ້ວຍເຫດນີ້, ບົດຮັບເພງສັກສິດວັນນີ້ຈຶ່ງກ່າວວ່າ: “ພຣະອົງເຈົ້າຊົງເປັນຜູ້ເມດຕາອາລີອ່ອນຫວານ”.

ສ່ວນໃນບົດອ່ານທີສອງນັກບຸນເປົາໂລກໍໃຊ້ຮູບພາບຂອງອາດາມເກົ່າທີ່ມາຈາກດິນແລະມີຄວາມປາດຖະໜາແລະກະທຳດັ່ງຄົນທົ່ວໄປຢູ່ໃນໂລກນີ້. ສ່ວນອາດາມໃໝ່ເກີດມາຈາກຈິດ, ມາຈາກສະຫວັນ. ດ້ວຍເຫດນີ້, ເຂົາຈຶ່ງກະທຳດັ່ງພຣະບິດາຜູ້ສະຖິດຢູ່ສະຫວັນຄືເປັນຜູ້ມີຄວາມຮັກເມດຕາຕໍ່ຄົນອື່ນ.

ແລະໃນພຣະວໍລະສານ, ພຣະເຢຊູເຈົ້າກໍກ່າວແກ່ພວກລູກສິດແລະຝູງຊົນທີ່ມາຟັງພຣະອົງວ່າ: ຈົ່ງໃຫ້ອະໄພແກ່ຜູ້ເປັນສັດຕູຂອງພວກເຈົ້າ. ຈົ່ງໃຫ້ຢືມໂດຍບໍ່ຫວັງຜົນກຳໄລ. ຈົ່ງໃຫ້ຜູ້ອື່ນໂດຍບໍ່ຫວັງສິ່ງຕອບແທນ. ຈົ່ງທຳດີຕໍ່ຜູ້ທີ່ທຳຮ້າຍພວກເຈົ້າ. ສິ່ງທີ່ກ່າວມານີ້ໝາຍວ່າ ຈົ່ງມີໃຈເມດຕາກະລຸນາແລະໃຫ້ອະໄພຕໍ່ກັນແລະກັນ. ຫລືເວົ້າອີກຢ່າງ, ຈົ່ງເປັນຜູ້ດີບໍລິບູນ ເໝືອນກັບພຣະບິດາເຈົ້າສະຫວັນຊົງເປັນຜູ້ດີບໍລິບູນນັ້ນແລ.

ແນ່ນອນ, ສິ່ງທີ່ພຣະເຢຊູເຈົ້າສອນພວກເຮົາວັນນີ້ບໍ່ແມ່ນເລື່ອງງ່າຍທີ່ຈະປະຕິບັດ. ດ້ວຍເຫດນີ້, ພວກເຮົາຈຶ່ງຕ້ອງອາໄສພຣະຄຸນແລະຄວາມຊ່ວຍເຫລືອຈາກພຣະເຈົ້າ. ເພາະສຳລັບພວກເຮົາເອງອາດເປັນໄປບໍ່ໄດ້, ແຕ່ສຳລັບພຣະເຈົ້າແລ້ວ ທຸກສິ່ງເປັນໄປໄດ້.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຕື່ມເຕັມຄວາມຮັກຂອງພຣະອົງໃນດວງໃຈຂອງລູກ. ເພື່ອລູກຈະໄດ້ຮູ້ຈັກຮັກຜູ້ອື່ນ, ດັ່ງທີ່ພຣະອົງຊົງຮັກລູກ. ແລະລູກຈະຮູ້ຈັກໃຫ້ອະໄພແກ່ຄົນອື່ນ, ດັ່ງທີ່ພຣະອົງໄດ້ໃຫ້ອະໄພແກ່ລູກນັ້ນແລ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ